ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງແຜນການ ແລະ ການລົງທຶນ

ເລກທີ... 2246/ຜທ.ຣມສ-ສປຊ

ນະຄອນຫລວງວຽງຈັນ, .....30 OCT 2008

## ຈົດໝາຍເຊີນ

ຮຽນ: ......................................................................................................

..........................................................................................................

..........................................................................................................

ຂ້າພະເຈົ້າ ຂໍຖືເປັນກຽດເຊີນທ່ານ ເຂົ້າຮ່ວມໃນກອງປະຊຸມ ການຈັດຕັ້ງປະຕິບັດຂະບວນການໂຕະມົນ ເຊິ່ງເປັນເວທີການປຶກສາຫາລື ລະຫວ່າງລັດຖະບານ ສປປ ລາວ ກັບບັນດາຜູ້ຕາງໜ້າຂອງອົງການ / ປະເທດທີ່ໃຫ້ການຊ່ວຍເຫຼືອແກ່ ສປປ ລາວ, ກອງປະຊຸມຈະໄດ້ຈັດຂຶ້ນທີ່ ໂຮງແຮມລາວພລາຊາ ໃນວັນທີ 24 ພະຈິກ 2008, ເປັນກຽດກ່າວໄຂກອງປະຊຸມໂດຍ ພະນະທ່ານ ບົວສອນ ບຸບຜາວັນ, ນາຍົກລັດຖະມົນຕີແຫ່ງ ສປປ ລາວ.

ຈຸດປະສົງຂອງກອງປະຊຸມຄັ້ງນີ້ແມ່ນ ເພື່ອທົບທວນຜົນຂອງກອງປະຊຸມ ການຈັດຕັ້ງປະຕິບັດຂະບວນການໂຕະມົນ ປະຈຳປີ 2007 ທີ່ຜ່ານມາ ໃນນັ້ນ ລວມທັງແຈ້ງໃຫ້ຊາບ ຄວາມຄືບໜ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ງົບປະມານ ສົກປີ 2007-2008, ຍຸດທະສາດຂອງຂະແໜງການຕ່າງໆ ທີ່ເປັນບູລິມະສິດ ພ້ອມທັງບັນຫາການພັດທະນາ ແລະ ກາລະໂອກາດເພື່ອເຊື່ອມໂຍງ ເຂົ້າໃນການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ.

ກ່ອນກອງປະຊຸມການຈັດຕັ້ງປະຕິບັດຂະບວນການໂຕະມົນ ວັນທີ 24 ພະຈິກ 2008, ຈະໄດ້ມີການຈັດກອງປະຊຸມປຶກສາຫາລື ສຳລັບຂະແໜງການທີ່ເປັນບູລິມະສິດ ທັງນີ້ກໍ່ເພື່ອເປີດໂອກາດໃຫ້ມີ ການສົນທະນາ ຢ່າງເລິກເຊິ່ງ ແລະ ຈະໄດ້ນຳສະເໜີ ຜົນຂອງການສົນທະນາດັ່ງກ່າວຕໍ່ ກອງປະຊຸມການຈັດຕັ້ງປະຕິບັດຂະບວນ ການໂຕະມົນ.

ວາລະກອງປະຊຸມໄດ້ຄັດຕິດມາພ້ອມນີ້. ສ່ວນເອກະສານຂໍ້ມູນອື່ນໆ ແລະ ເອກະສານຄວາມເປັນມາຂອງກອງປະຊຸມ ຈະໄດ້ຈັດສົ່ງຕາມພາຍຫລັງ. ຖ້າທ່ານຕ້ອງການຊາບຂໍ້ມູນເພີ້ມເຕີມ / ແຈ້ງຕອບການເຂົ້າຮ່ວມຂອງທ່ານ ມາຍັງກອງເລຂາ: ທ່ານ ສີສົມພອນ ເພັດດາວເຮືອງ ແລະ ນາງ ອານຸລັກ ເມືອງນາລາດ, ກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ. ເບີໂທລະສັບ: (856-20) 2229355, 2221991, ແຟັກ : (856-21) 263779.

ລັດຖະມົນຕີວ່າການ ກະຊວງແຜນການ ແລະ ການລົງທຶນ

ສຸລີວົງ ດາລາວົງ